ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ 592/ຖວທ

ນະຄອນຫຼວງວຽງຈັນ, ວັນທີ 22/7/2021

ຂໍ້ຕົກລົງ

ວ່າດ້ວຍການແຕ່ງຕັ້ງ ຄະນະກຳມະການປະສານງານ ການບໍລິການ ການລົງທຶນປະຕູດຽວ ຂອງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 95/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການບໍລິການ ການລົງທຶນປະຕູດຽວ ແລະ ໜ່ວຍງານປະສານງານການບໍລິການ ການລົງທຶນປະຕູດຽວຂັ້ນສູນກາງ ສະບັບເລກທີ 002 ຄລທ.ສ, ລົງວັນທີ 20 ສິງຫາ 2018;
- ອີງຕາມ ຄຳສັ່ງວ່າດ້ວຍການປັບປຸງວຽກການບໍລິການ ການອອກໃບອະນຸຍາດລົງທຶນ ແລະ ການອອກໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 03/ນຍ, ລົງວັນທີ 21 ມັງກອນ 2020;
- ອີງຕາມ ແຈ້ງການຂອງລັດຖະມົນຕີ ສະບັບເລກທີ 448/ຖວທ, ລົງວັນທີ 14 ກໍລະກົດ 2021 ກ່ຽວກັບການຄຸ້ມຄອງລວມສູນລະບົບປະຕູດຽວ ໂຄງການລົງທຶນຂອງພາກເອກະຊົນ ແລະ ໂຄງການຊ່ວຍເຫຼືອເພື່ອການພັດທະນາ (ຊກພ ຫຼື ODA)ໃນຂະແໜງການຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ.

ລັດຖະມົນຕີ ຕົກລົງ:

ມາດຕາ 1: ແຕ່ງຕັ້ງຄະນະຊີ້ນຳລວມ ວຽກງານປະສານງານການບໍລິການ ການລົງທຶນປະຕູດຽວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຊຶ່ງປະກອບມີລາຍຊື່ດັ່ງລຸ່ມນີ້:

1.	ທ່ານ ອຸ່ນທອງ ຂາວພັນ	ຮອງລັດຖະມົນຕີກະຊວງ ຖວທ	ເປັນຫົວໜ້າ
2.	ທ່ານ ນາງ ແພງຈັນ ແພງເມືອງ	ຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ	ເປັນຮອງ
3.	ທ່ານ ບົວໄລ ພານຸວົງ	ຫົວໜ້າຫ້ອງການກະຊວງ	ເປັນຄະນະ
4.	ທ່ານ ສົມສະຫວາດ ພົງສາ	ຫົວໜ້າກົມສື່ມວນຊົນ	ເປັນຄະນະ
5.	ທ່ານ ນາງ ດາລານີ ພົມມະວົງສາ	ຫົວໜ້າກົມຄຸ້ມຄອງການທ່ອງທ່ຽວ	ເປັນຄະນະ
6.	ທ່ານ ພະຂັນໄຊ ສີຄັນໄຊ	ຮອງຫົວໜ້າກົມມໍຣະດົກ	ເປັນຄະນະ

ມາດຕາ 2: ພາລະບົດບາດຂອງຄະນະຊີ້ນຳລວມ ປະສານງານການບໍລິການ ການລົງທຶນປະຕູດຽວປະກອບມີດັ່ງນີ້:

- ອອກໃບຢັ້ງຢືນການຮັບເອກະສານພາຍຫຼັງທີ່ໄດ້ກວດກາຄວາມຖືກຕ້ອງຄົບຖ້ວນຕາມແບບຟອມທີ່ກຳນົດໄວ້ ແລະ ລະບຸວັນ,ເວລາການນັດໝາຍມາຮັບເອົາຄຳຕອບຕໍ່ເອກະສານທີ່ຜູ້ລົງທຶນໄດ້ສະເໜີ;
- ຈັດກອງປະຊຸມວິຊາການເພື່ອພິຈາລະນາຄຳຮ້ອງ, ຄຳສະເໜີຂອງຜູ້ລົງທຶນກ່ຽວກັບວຽກງານລົງທຶນດ້ານ ຖວທ ກ່ອນນຳສະເໜີຕໍ່ຄະນະນຳກະຊວງພິຈາລະນາຕາມລະບຽບການ;
- ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ແລະ ໜ່ວຍງານປະສານງານປະຕູດຽວຂອງຂະແໜງການ ທີ່ກ່ຽວຂ້ອງ ຂັ້ນສູງກາງ ເພື່ອຈັດຕັ້ງປະຕິບັດວຽກງານການບໍລິການ ການລົງທຶນປະຕູດຽວໃນການສົ່ງເສີມ ແລະ ດຶງດູດການລົງທຶນໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ຮັບປະກັນຄວາມວ່ອງໄວ ແລະ ໂປ່ງໃສໃນການບໍລິການ ການລົງທຶນປະຕູດຽວ;
- ຊີ້ນຳ, ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳ ແລະ ສັນຍາທີ່ພົວພັນກັບ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ;
- ຊີ້ນຳ, ກວດກາ, ປັບປຸງ ແລະ ແກ້ໄຂຂັ້ນຂອດການພິຈາລະນາອະນຸມັດການລົງທຶນດ້ານ ຖວທ ໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ໂປ່ງໃສ;
- ຊີ້ນຳການຈັດຕັ້ງປະຕິບັດວຽກງານການບໍລິການ ການລົງທຶນປະຕູດຽວ ໃນການສົ່ງເສີມ ແລະ ດຶງດູດການລົງທຶນໃນຂະແໜງການ ຖວທ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;
- ປຶກສາຫາລື, ຕົກລົງຮັບຮອງເອົາດ້ານຫຼັກການກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ໃນຂະແໜງການ ຖວທ ເພື່ອສະເໜີຄະນະນຳກະຊວງ ພິຈາລະນາຕາມລະບຽບການ;
- ພິຈາລະນາຕໍ່ສັນຍາ, ດັດແກ້ສັນຍາ, ເພີ່ມ ຫຼື ຫຼຸດກິດຈະການຂອງໂຄງການລົງທຶນຕ່າງໆໃນແຕ່ລະໄລຍະ;
- ຄົ້ນຄວ້າພິຈາລະນາການອອກໃບອະນຸຍາດ ແລະ ການຕໍ່ອາຍຸໃບອະນຸຍາດດຳເນີນທຸລະກິດຂອງຜູ້ລົງທຶນໃນຂະແໜງ ຖວທ ທັງພາຍໃນ ແລະ ຕ່າງປະເທດ ກ່ອນການເຊັນອະນຸມັດເອກະສານດັ່ງກ່າວຈາກກົມວິຊາການກ່ຽວຂ້ອງ;
- ນຳສະເໜີຄະນະນຳກະຊວງ ພິຈາລະນາຕົກລົງບັນດາບັນຫາ ຫຼື ໂຄງການທີ່ກອງປະຊຸມຄະນະປະສານງານການບໍລິການ ການລົງທຶນປະຕູດຽວໄດ້ເປັນເອກະພາບກັນ ຫຼື ຍັງມີຄວາມຫຍຸ້ງຍາກ;
- ເຮັດວຽກ ແລະ ເຂົ້າຮ່ວມກອງປະຊຸມຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນທີ່ກະຊວງແຜນການ ແລະ ການລົງທຶນຈັດຂຶ້ນຕາມການມອບໝາຍ;
- ຊີ້ນຳກອງເລຂາຂອງຄະນະປະສານງານພາຍໃນກະຊວງ ເພື່ອສະໜອງຂໍ້ມູນວຽກງານການລົງທຶນປະຕູດຽວ ທີ່ຕິດພັນກັບວຽກງານ ຖວທ ໃຫ້ແກ່ຫ້ອງການປະສານງານ ການບໍລິການການລົງທຶນປະຕູດຽວຂັ້ນສູນກາງ;
- ຈັດກອງປະຊຸມຄະນະປະສານງານການບໍລິການ ການລົງທຶນປະຕູດຽວຂອງກະຊວງ ຖວທ ເພື່ອສະຫຼຸບ, ຖອດຖອນບົດຮຽນ, ປະເມີນຜົນ ແລະ ວາງແຜນປະຈຳ 3 ເດືອນ;
- ຈັດກອງປະຊຸມພົບປະກັບຜູ້ລົງທຶນ ເພື່ອສະເໜີການສົ່ງເສີມການລົງທຶນດ້ານ ຖວທ ປຶກສາຫາລືບັນຫາສະເໜີຂອງຜູ້ລົງທຶນ ຫຼື ຜູ້ໃຫ້ທຶນຊ່ວຍເຫຼືອ.

- ປັບປຸງ ແລະ ກຳນົດ ບັນຊີຮຽກການລົງທຶນ ແຕ່ລະໄລຍະໃຫ້ສອດຄ່ອງກັບການພັດທະນາວຽກງານ ຖວທ.

ມາດຕາ 3: ແຕ່ງຕັ້ງກອງເລຂາ ຄະນະປະສານງານການບໍລິການ ການລົງທຶນປະຕູດຽວຂອງ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຊຶ່ງປະກອບມີບັນດາທ່ານ ດັ່ງນີ້:

1. ທ່ານ ນາງ ສີຈັນ ແສງພິມ	ຮອງຫົວໜ້າກົມແຜນການ ແລະ ການຮ່ວມມືສາກົນ	ເປັນຫົວໜ້າ
2. ທ່ານ ບຸນໄທ ທົ່ງທິລາດ	ຮອງຫົວໜ້າຫ້ອງການ ກະຊວງ	ເປັນຮອງ
3. ທ່ານ ໂອເງີນ ປັນຍານຸວົງ	ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ	ເປັນຄະນະ
4. ທ່ານ ອິນປອນ ນະຄອນສີ	ຮອງຫົວໜ້າກົມສື່ມວນຊົນ	ເປັນຄະນະ
5. ທ່ານ ນາງ ສີພອນໄພ ສິດທິໄຊ	ຮອງຫົວໜ້າກົມຄຸ້ມຄອງການທ່ອງທ່ຽວ	ເປັນຄະນະ
6. ທ່ານ ບຸນເພັງ ສຸພາບ	ຮອງຫົວໜ້າກົມວັດທະນະທຳມະຫາຊົນ	ເປັນຄະນະ
7. ທ່ານ ສຳລານ ຫຼວງອາໄພ	ຮອງຫົວໜ້າກົມວັນນະຄະດີ ແລະ ພິມຈຳໜ່າຍ	ເປັນຄະນະ
8. ທ່ານ ເດດນະຄອນ ຫຼວງໂມວິຫານ	ຮອງຫົວໜ້າກົມຮຸບເງົາ	ເປັນຄະນະ
9. ທ່ານ ບຸດສະດີ ຄັນທະວົງ	ຫົວໜ້າພະແນກ, ກົມຄຸ້ມຄອງການທ່ອງທ່ຽວ	ເປັນຄະນະ
10. ທ່ານ ສຸກສະຫວັນ ສຸລິວົງ	ຫົວໜ້າພະແນກ ກົມແຜນການ ແລະ ການຮ່ວມມືສາກົນ	ເປັນຄະນະ
11. ທ່ານ ສົມພົງ ວົງໄຊ	ຮອງໜ້າພະແນກ, ກົມພັດທະນາການທ່ອງທ່ຽວ	ເປັນຄະນະ
12. ທ່ານ ຄູນມີ ພົມມະນີລາດ	ຮອງຫົວໜ້າພະແນກ ຫ້ອງການກະຊວງ	ເປັນຄະນະ
13. ພະນັກງານວິຊາການ	ພະແນກແຜນການ ແລະ ການລົງທຶນ, ກຜຮ	ເປັນຄະນະ

ມາດຕາ 4: ໜ້າທີ່ຂອງກອງເລຂາຄະນະປະສານງານການບໍລິການ ການລົງທຶນປະຕູດຽວ ມີດັ່ງນີ້:

- ເປັນເສນາທິການໃຫ້ຄະນະປະສານງານການບໍລິການ ການລົງທຶນປະຕູດຽວ ເພື່ອສະຫຼຸບ, ສັງລວມ ແລະ ສະໜອງຂໍ້ມູນການສະເໜີໂຄງການລົງທຶນຕ່າງໆຂອງຂະແໜງການ ຖວທ ທັງພາຍໃນ ແລະ ຕ່າງປະເທດ; ຄົ້ນຄວ້າທາງດ້ານວິຊາການ ຂອງຂະແໜງການຂອງຕົນ ເພື່ອລາຍງານຫາຄະນະຊີ້ນຳໃນການພິຈາລະນາການລົງທຶນ ຂອງຂະແໜງການ ເພື່ອປະຕິບັດຕາມກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ; ຕິດຕາມ ແລະ ເກັບກຳວຽກງານການລົງທຶນຜ່ານປະຕູດຽວດ້ານ ຖວທ ໃນແຕ່ລະໄລຍະ; ປະສານງານກັບກົມສົ່ງເສີມການລົງທຶນ ກະຊວງແຜນການ ແລະ ການລົງທຶນ ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງການລົງທຶນໃນຂະແໜງການ ຖວທ;
- ເຂົ້າຮ່ວມປະຊຸມ, ຕິດຕາມບັນທຶກກອງປະຊຸມ, ຮ່າງບົດສະຫຼຸບລາຍງານ ແລະ ປະຕິບັດວຽກງານອື່ນໆຕາມການມອບໝາຍຂອງຄະນະຊີ້ນຳລວມ.

ມາດຕາ 5: ລະບຽບການດຳເນີນກອງປະຊຸມ:

- ຄະນະປະສານງານການບໍລິການ ການລົງທຶນປະຕູດຽວ ທີ່ໄດ້ຮັບການແຕ່ງຕັ້ງ ແລະ ບັນດາພາກສ່ວນທີ່ກ່ຽວຂ້ອງກັບບັນຫາທີ່ນຳເຂົ້າພິຈາລະນາໃນກອງປະຊຸມ ຕ້ອງເຂົ້າຮ່ວມກອງປະຊຸມຕາມການເຊື້ອເຊີນ, ໃນກໍລະນີຈຳເປັນບໍ່ສາມາດເຂົ້າຮ່ວມໄດ້ແມ່ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມແທນ ແລະ ຜູ້ເຂົ້າຮ່ວມກອງປະຊຸມມີສິດປະກອບຄຳເຫັນຕໍ່ທຸກບັນຫາທີ່ຕິດພັນກັບວຽກງານຂອງຕົນ;

- ກອງປະຊຸມພິຈາລະນາຮັບຮອງດ້ານວິຊາການ ໂດຍມີບົດບັນທຶກກອງປະຊຸມທີ່ລະບຸເນື້ອໃນຜົນການປຶກສາຫາລືເປັນລາຍລັກອັກສອນ ມີລາຍເຊັນຂອງທ່ານປະທານກອງປະຊຸມເພື່ອສະເໜີທ່ານລັດຖະມົນຕີ ພິຈາລະນາອະນຸມັດຕາມລະບຽບການ.

ມາດຕາ 6: ຫ້ອງການ, ບັນດາກົມອ້ອມຂ້າງກະຊວງ, ພາກສ່ວນທີ່ກ່ຽວຂ້ອງ ແລະ ບັນດາທ່ານ ທີ່ໄດ້ຮັບແຕ່ງຕັ້ງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 7: ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ສວນສະຫວັນ ວິຍະກາດ